# ປະກາດຫາບົດສະເໜີໂຄງການໂດຍຫຍໍ້

**ໂຄງການກະສິກຳເພື່ອໂພຊະນາການ ໄລຍະ II (ANF II)** ໄດ້ຮັບການຈັດຕັ້ງປະຕິບັດໂດຍກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງເປັນການສືບຕໍ່ຈາກຜົນໄດ້ຮັບໃນໄລຍະ I ດ້ວຍການສະໜັບສະໜູນຢ່າງຕໍ່ເນື່ອງຈາກກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD) ແລະ ອົງການອາຫານໂລກ (WFP), ລັດຖະບານແຫ່ງ ສປປ ລາວ ແລະ ທຶນໃໝ່ຈາກໂຄງການກະສິກຳ ແລະ ຄວາມໝັ້ນຄົງດ້ານອາຫານໂລກ (GAFSP) ເພື່ອປະຕິບັດໂຄງການດັ່ງທີ່ໄດ້ລະບຸໄວ້ໃນບົດສະເຫນີໂຄງການ.

## ເປົ້າໝາຍໂຄງການ ແລະ ຈຸດປະສົງ:

ເປົ້າໝາຍຂອງໂຄງການແມ່ນເຮັດໃຫ້ 28,000 ຄອບຄົວທີ່ມີຄວາມສ່ຽງທີ່ອາໄສຢູ່ໃນເຂດໂຄງການສາມາດເພີ່ມລາຍຮັບໃຫ້ໄດ້ 20% ໃນປີ 2030.

## ຄວາມສຳຄັນ ແລະ ຂອບເຂດຂອງບົດສະເໜີໂຄງການໂດຍຫຍໍ້:

ໂຄງການກະສິກຳເພື່ອໂພສະນາການ ໄລຍະ 2 ແມ່ນໄດ້ມີການຊຸກຍູ້ໃຫ້ບັນດາສະມາຄົມທີ່ມີປະສົບການ ແລະ ມີຄຸນວຸດທິ ທີ່ເໝາະສົມ ທີ່ມີຄວາມສົນໃຈໃນການບໍລິການໃຫ້ແກ່ຄົວເຮືອນຊົນນະບົດໃນເຂດເປົ້າໝາຍຂອງໂຄງການກະສິກຳເພື່ອໂພສະນາການ ໄລຍະ II, ໃຫ້ສະໝັກເອົາ '**ທຶນພັດທະນາ**' ໂດຍການຍື່ນບົດສະເໜີໂຄງການໂດຍຫຍໍ້ຕາມກອບຂໍ້ກຳນົດຂອງໂຄງການ ກະສິກຳເພື່ອໂພສະນາການ ໄລຍະ II (ກະລຸນາເບິ່ງແບບຟອມໃນຄູ່ມືການນຳໃຊ້ກອງທຶນພັດທະນາ).

## ໄລຍະເວລາ:

ໄລຍະເວລາຂອງໂຄງການແມ່ນ 12 ເດືອນ ແລະ ບໍ່ເກີນ 24 ເດືອນ ນັບແຕ່ເດືອນກຸມພາ 2025 ເປັນຕົ້ນໄປ.

## ຄຸນວຸດທິ ແລະ ປະສົບການທີ່ຕ້ອງການ:

ສະມາຄົມລາວທີ່ມີຄວາມສົນໃຈ ຕ້ອງສອດຄ່ອງກັບເງື່ອນໄຂດັ່ງຕໍ່ໄປນີ້:

- ມີການຈົດທະບຽນເປັນສະມາຄົມ ຫຼື ຢູ່ໃນຂັ້ນຕອນການຈົດທະບຽນຕາມດຳລັດວ່າດ້ວຍສະມາຄົມ ເລກທີ່ 238/ລບ.
- ມີປະສົບການທີ່ພິສູດແລ້ວຢ່າງໜ້ອຍ 3 ປີ ໃນຂະແໜງການໃດໜຶ່ງ ດັ່ງນີ້: ກະສິກຳທີ່ເປັນມິດຕໍ່ສະພາບແວດລ້ອມ, ການປັບຕົວຕໍ່ການປ່ຽນແປງຂອງດິນຟ້າອາກາດ, ຄວາມຂາດແຄນທາງດ້ານໂພຊະນາການ, ການໃຫ້ຄວາມຮູ້ທາງດ້ານທຸລະກິດ ແລະ ການເງິນ, ການສ້າງຂີດຄວາມສາມາດ, ການເສື່ອມສານບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງສັງຄົມຢ່າງທົ່ວເຖິງ (ລວມທັງຊາວໜຸ່ມ, ຄົນຊົນເຜົ່າ, ຄົນພິການ, ການຕິດຕາມ ແລະ ການປະເມີນຜົນ, ການຖ່າຍທອດຄວາມຮູ້ ແລະ ການສື່ສານ).
- ໄດ້ພິສູດປະສົບການໃນການເຮັດວຽກກັບຊຸມຊົນເຂດຫ່າງໄກສອກຫຼີກໃນແຂວງເປົ້າໝາຍຂອງໂຄງການ ກະສິກຳເພື່ອໂພສະນາການ ໄລຍະ II.
- ມີລະບົບການຄຸ້ມຄອງບັນຊີ ແລະ ການເງິນທີ່ໜ້າເຊື່ອຖື.

## ວິທີສະຫມັກ:

ສະມາຄົມທີ່ສົນໃຈ ແມ່ນໃຫ້ຂຽນບົດສະເໜີໂຄງການໂດຍຫຍໍ້ ແລ້ວສົ່ງມາທີ່ອີເມວ: npco.cso@afn2.org.la ໃນເວລາທີ່ກຳນົດໄວ້ລຸ່ມນີ້ ແລະໃຫ້ສອດຄ່ອງກັບຄຳແນະນຳທີ່ລະບຸໄວ້ໃນ ຄູ່ມືການນຳໃຊ້ກອງທຶນພັດທະນາ. ຫຼັງຈາກນັ້ນ ໃຫ້ສົ່ງແບບຟອມສະຫມັກມາແບບຟາຍອີເລັກໂທລນິກ, ແນວໃດກໍ່ຕາມ, ສຳຫຼັບແບບຟອມທີ່ເປັນເອກະສານ ກໍ່ຍັງສາມາດສົ່ງມາໄດ້ ຕາມທີ່ຢູ່ທີ່ໄດ້ລະບຸຂ້າງລຸ່ມນີ້.

## ຂະບວນການຄັດເລືອກ:

- ລາຍຊື່ທີ່ຖືກຄັດເລືອກ: ເມື່ອໄດ້ຮັບບົດສະເໜີໂຄງການໂດຍຫຍໍ້ແລ້ວ, ໂຄງການກະສິກຳເພື່ອໂພສະນາການ 2 ຈະທົບທວນຄືນເອກະສານທີ່ໄດ້ຮັບເພື່ອການຄັດເລືອກສະມາຄົມທີ່ມີທ່າແຮງ, ແລະ
- ສະມາຄົມທີ່ຖືກຄັດເລືອກຈະຖືກແຈ້ງໃຫ້ສົ່ງບົດສະເຫນີໂຄງການແບບລະອຽດຕາມພາຍຫລັງ.

## ເປົ້າໝາຍຜູ້ໄດ້ຮັບຜົນປະໂຫຍດ:

ສະມາຄົມທີ່ສະໝັກ ແມ່ນຈະໃຫ້ບໍລິການສະເພາະກຸ່ມເປົ້າໝາຍຂອງໂຄງການ ກະສິກຳເພື່ອໂພສະນາການ ໄລຍະ II, ໂດຍສະເພາະແມ່ນ:

- ເດັກນ້ອຍອາຍຸຕໍ່າກວ່າ 5 ປີ (CU5s);
- ເດັກຍິງໄວລຸ້ນ (ອາຍຸ 10-19 ປີ);
- ແມ່ຍິງໃນໄວຈະເລີນພັນ (ອາຍຸ 15-49 ປີ)
- ໄວໜຸ່ມ (ອາຍຸ 15-35); ແລະ
- ອື່ນໆ (ຮັບປະກັນໃຫ້ມີເພດຍິງຢ່າງໜ້ອຍ 50% ແລະ ກວມເອົາຊົນເຜົ່າຕ່າງໆສູງເຖິງ 70%).

## ງົບປະມານ:

ງົບປະມານຕໍ່ໜຶ່ງທຶນແມ່ນລະຫວ່າງ **USD 30,000 – USD 50,000**

## ພາສາ:

ບົດສະເໜີໂຄງການໂດຍຫຍໍ້ແມ່ນໃຫ້ສົ່ງເປັນພາສາລາວ. ໃນກໍລະນີທີ່ຂຽນເປັນພາສາອັງກິດ, ກໍຄວນມີສະບັບແປເປັນພາສາລາວມາພ້ອມ.

## ມື້ກຳນົດສົ່ງໃບສະຫມັກ:

ການຍື່ນບົດສະເໜີໂຄງການໂດຍຫຍໍ້ ແມ່ນບໍ່ໃຫ້ເກີນວັນທີ **27 ກັນຍາ 2024.**

**ຫ້ອງການປະສານງານໂຄງການແຫ່ງຊາດ (NPCO), ກົມແຜນການ ແລະ ການຮ່ວມມື (DOPC), ກະຊວງກະສິກຳ ແລະປ່າໄມ້ (MAF)**

ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທລະສັບ: 856 - 21- 416 556; ມືຖື: 856-20-2222 0565